

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເປັນທະນາຄານທີ່ດຳເນີນການເຄື່ອນໄຫວວຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ. ທຄຕລ ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃນການເຮັດທຸລະກຳທາງດ້ານການເງິນ ໃຫ້ແກ່ລູກຄ້າ. ປັດຈຸບັນ ທຄຕລ ມີ **20** ສາຂາ ແລະ ໜ່ວຍບໍລິການຫຼາຍກວ່າ **90** ໜ່ວຍທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານຈຳນວນໜຶ່ງ ເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

ທຄຕລ ມີຄວາມຕ້ອງການຮັບພະນັກງານວິຊາການບໍລິການລູກຄ້າ (Teller) ແລະ ວິຊາການກວດກາພາຍໃນ ເພື່ອປະກອບໃຫ້ສາຂາ ທຄຕລ ເຂດພາກເໜືອ, ດັ່ງມີລາຍລະອຽດລຸ່ມນີ້:

1. **ສາຂາຜົ້ງສາລີ** — **04 ຄົນ (ຕຳແໜ່ງກວດກາ 02 ຄົນ ແລະ Teller 02 ຄົນ)**
2. **ສາຂາຫຼວງນ້ຳທາ** — **04 ຄົນ (ຕຳແໜ່ງກວດກາ 02 ຄົນ ແລະ Teller 02 ຄົນ)**
3. **ສາຂາຫຼວງພະບາງ** — **04 ຄົນ (ຕຳແໜ່ງກວດກາ 02 ຄົນ ແລະ Teller 02 ຄົນ)**
4. **ສາຂາອຸດົມໄຊ** — **05 ຄົນ (ຕຳແໜ່ງກວດກາ 02 ຄົນ ແລະ Teller 03 ຄົນ)**
5. **ສາຂາໄຊຍະບູລີ** — **01 ຄົນ (ຕຳແໜ່ງ Teller)**

❖ **ເງື່ອນໄຂຜູ້ສະໝັກ**

- ✓ ເພດ: ຍິງ ຫຼື ຊາຍ ມີອາຍຸບໍ່ເກີນ 30 ປີ (ເກີດໃນປີ 1989 ເປັນຕົ້ນໄປ).
- ✓ ມີໃບປະກາດຈົບປະລິນຍາຕີຂຶ້ນໄປ ຈາກພາຍໃນ ຫຼື ຕ່າງປະເທດໃນສາຂາທີ່ກ່ຽວຂ້ອງກັບວຽກງານທະນາຄານ ເຊັ່ນ: ການເງິນ, ການທະນາຄານ, ບັນຊີ, ການຕະຫຼາດ, ການຄ້າ, ເສດຖະສາດນຳໃຊ້, ບໍລິຫານທຸລະກິດ ຫຼື ການກວດສອບ ທີ່ມີຄະແນນ CGPA ໂດຍສະເລ່ຍ **2.70/4.00** ຫຼື **6.75/10** ຫຼື **67/100** ຂຶ້ນໄປ (ສຳລັບສາຂາເສດຖະສາດທີ່ລົງເລິກວິຊາຮຽນເຊັ່ນ: ເສດຖະສາດທ່ອງທ່ຽວ, ເສດຖະສາດໄອທີ, ເສດຖະສາດການເມືອງ, ເສດຖະສາດພາກລັດ, ພາສີອາກອນ, ເສດຖະສາດກະສິກຳ, ເສດຖະສາດຂົນສົ່ງ, ເສດຖະສາດພັດທະນາ ແລະ ການວາງແຜນ ແລະ ອື່ນໆທີ່ບໍ່ກ່ຽວຂ້ອງກັບວຽກງານການທະນາຄານ ແມ່ນຈະບໍ່ໄດ້ຮັບການພິຈາລະນາໃຫ້ສະໝັກ).
- ✓ ສາມາດສື່ສານພາສາຕ່າງປະເທດໃດໜຶ່ງໄດ້ໃນລະດັບດີເຊັ່ນ: ອັງກິດ, ຈີນ, ຫວຽດນາມ (ເວົ້າ, ຂຽນ, ອ່ານ ແລະ ຟັງເຂົ້າໃຈ)
- ✓ **ສຳລັບຜູ້ສະໝັກ ສາຂາຫຼວງນ້ຳທາ ແມ່ນຕ້ອງໄດ້ພາສາຈີນໃນລະດັບ HSK 4 ຂຶ້ນໄປ ແລະ ຕ້ອງມີໃບຢັ້ງຢືນຢ່າງເປັນທາງການ.**
- ✓ **ຜູ້ສະໝັກແຕ່ລະສາຂາ ຕ້ອງເປັນຄົນທ້ອງຖິ່ນຂອງແຂວງທີ່ຕົນສະໝັກເທົ່ານັ້ນ ໂດຍມີເອກະສານຢັ້ງຢືນທີ່ອອກຢູ່ແຂວງທີ່ຕົນສະໝັກ ເຊັ່ນ: ສຳມະໂນຄົວ, ບັດປະຈຳຕົວ ຫຼື ໃບຢັ້ງຢືນທີ່ຢູ່ (ຜູ້ສະໝັກຈະຕ້ອງປະຈຳການຢູ່ແຂວງດັ່ງກ່າວ ເປັນການຖາວອນ ແລະ ບໍ່ສາມາດຂໍສັບປ່ຽນບ່ອນປະຈຳການໄດ້).**
- ✓ ມີສຸຂະພາບແຂງແຮງດີ, ມີຄວາມຊື່ສັດບໍລິສຸດ, ມະນຸດສຳພັນດີ, ບຸກຄະລິກອ່ອງໄອຫ້າວຫັນ ແລະ ອົດທົນ.
- ✓ ມີຄວາມລະອຽດຮອບຄອບ, ມີລະບຽບວິໄນ, ມີຄວາມຮັບຜິດຊອບສູງ ແລະ ສາມາດເຮັດວຽກເປັນທີມໄດ້.
- ✓ ສາມາດເຮັດວຽກພາຍໃຕ້ຄວາມກົດດັນ, ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະ.

❖ **<u>ວິທີສະໝັກວຽກ:</u> ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈທີ່ຈະສະໝັກວຽກໃນຕຳແໜ່ງດັ່ງກ່າວໃຫ້ເອົາໃຈໃສ່ປະຕິບັດຕາມຂັ້ນຕອນດັ່ງນີ້:**

1) ດາວໂຫຼດເອົາແບບຟອມສະໝັກວຽກໄດ້ທີ່ **www.bcel.com.la** ເຂົ້າໄປທີ່ ສະໝັກງານ > ດາວໂຫຼດຟອມສະໝັກວຽກສຳລັບສາຂາ.
2) ຕື່ມຂໍ້ມູນຟອມສະໝັກທີ່ດາວໂຫຼດ ແລະ ປະກອບເອກະສານໃຫ້ຄົບຖ້ວນດັ່ງນີ້:
   - ✓ ຊີວະປະຫວັດເປັນພາສາ 4 ໜ້າ ສະບັບຕົ້ນອາຍຸບໍ່ເກີນ 3 ເດືອນ.
   - ✓ ຮູບຖ່າຍ 3x4 ຈຳນວນ 03 ໃບ, ຖ່າຍບໍ່ເກີນ 3 ເດືອນ.
   - ✓ ສຳເນົາບັດປະຈຳຕົວ ຫຼື ພາດສປອດ ແລະ ສຳມະໂນຄົວ.
   - ✓ ສຳເນົາໃບປະກາດວິຊາສະເພາະ ແລະ ໃບຄະແນນ.
   - ✓ ໃບຢັ້ງຢືນທີ່ຢູ່ສະບັບຕົ້ນ, ອາຍຸບໍ່ເກີນ 3 ເດືອນ.
   - ✓ ສຳເນົາໃບປະກາດ ມ ປາຍ.
   - ✓ ໃບກວດສຸຂະພາບສະບັບຕົ້ນ, ອາຍຸບໍ່ເກີນ 6 ເດືອນ.
   - ✓ ໃບຢັ້ງຢືນຄ້ຳປະກັນສະບັບຕົ້ນ, ອາຍຸບໍ່ເກີນ 3 ເດືອນ.
   - ✓ ໃບແຈ້ງໂທດສະບັບຕົ້ນ, ອາຍຸບໍ່ເກີນ 3 ເດືອນ.
3) ສະຖານທີ່ຍື່ນຟອມສະໝັກ: **ຂະແໜງຫ້ອງການ-ບັນຊີ-ໄອທີ ຂອງສາຂາທີ່ຕົນຕ້ອງການສະໝັກ.**
4) ກຳນົດວັນ, ເວລາຮັບເອກະສານ: **ວັນທີ 05-27/09/2019, ວັນຈັນ-ສຸກ ເລີ່ມແຕ່ເວລາ 08:30-15:30 ໂມງ.**
5) ຜູ້ສະໝັກຕ້ອງມາສົ່ງເອກະສານດ້ວຍຕົນເອງເທົ່ານັ້ນ ແລະ ໃຫ້ຖືໃບປະກາດ ແລະ ໃບຄະແນນສະບັບຕົ້ນມາຢັ້ງຢືນພ້ອມ.
6) ຜູ້ສະໝັກທີ່ມີເອກະສານຄົບຖ້ວນ ແລະ ມີເງື່ອນໄຂຖືກຕ້ອງຕາມການປະກາດເທົ່ານັ້ນ ທຄຕລ ຈຶ່ງຈະພິຈາລະນາຮັບຟອມສະໝັກ.
7) ສຳລັບຜູ້ທີ່ກຳລັງສຶກສາຢູ່ ຫຼື ຮຽນຈົບແລ້ວ ແຕ່ຍັງບໍ່ມີໃບປະກາດສະນິຍະບັດ ແລະ ໃບຄະແນນຢ່າງເປັນທາງການ ແມ່ນບໍ່ສາມາດສະໝັກໄດ້.
8) ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະ ພີ່ນ້ອງຂອງຜູ້ສະໝັກງານມາພົວພັນຮັບ-ສົ່ງເອກະສານແທນ.
9) ສາມາດໂທສອບຖາມລາຍລະອຽດໄດ້ທີ່ພະແນກຈັດຕັ້ງ-ພະນັກງານ ສຳນັກງານໃຫຍ່ ໂທ: 021 213200 ຕໍ່ 417 ຫຼື 418 ໃນວັນ ແລະ ໂມງລັດຖະການ.

ນະຄອນຫຼວງວຽງຈັນ, ວັນທີ 04/09/2019
ຫົວໜ້າພະແນກຈັດຕັ້ງ-ພະນັກງານ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ພະແນກ ຈັດຕັ້ງແລະພະນັກງານ

ນ.ບົວໄພວັນ ນັນດາວົງ